ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມສົ່ງເສີມການລົງທຶນທົ່ວໄປ

0756----

ເລກທີ______/ສລທ.ຫຖຊ
ນະຄອນຫລວງວຽງຈັນ,ວັນທີ 30 JUL 2

## ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໃນນະຄອນຫລວງວຽງຈັນ

ເລື່ອງ: ໃຫ້ບັນທຶກລະຫັດວິສາຫະກິດ ຖ້າມີການປ່ຽນແປງເລກລະຫັດຂອງຂັ້ນສູນກາງ ມາເປັນເລກລະຫັດຂອງຂັ້ນແຂວງ ແລະ ນະຄອນຫລວງ.

- ອີງຕາມແຈ້ງການ ກ່ຽວກັບຂອບເຂດການຂຶ້ນທະບຽນວິສາຫະກິດ ສຳລັບການລົງທຶນໃນກິດຈະການທົ່ວໄປ ສະບັບເລກທີ0458/ອຄ.ສລທ, ລົງວັນທີ01/3/2012
- ອີງຕາມໃບນຳສົ່ງສຳເນົາທະບຽນວິສາຫະກິດ ເລກທີ0233/ສລທ, ລົງວັນທີ 26/3/2012

ກົມສົ່ງເສີມການລົງທຶນທົ່ວໄປ ແຈ້ງມາຍັງທ່ານຊາບວ່າ: ເພື່ອເຮັດໃຫ້ຂໍ້ມູນຂອງຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດໃນຂອບເຂດທົ່ວປະເທດ ໄດ້ຖືກຈັດເກັບໄວ້ເປັນລະບົບ ຢູ່ໃນສູນລວມຖານຂໍ້ມູນວິສາຫະກິດແຫ່ງຊາດ(National Database), ສະນັ້ນ ຖ້າມີການດັດແກ້ປ່ຽນແປງເລກລະຫັດວິສາຫະກິດທີ່ຂຶ້ນຢູ່ຂັ້ນກະຊວງ(01-00000001) ມາເປັນເລກລະຫັດຂອງຂັ້ນແຂວງ,ນະຄອນຫລວງ ຕາມການແບ່ງຂັ້ນຄຸ້ມຄອງ ໃຫ້ບັນທຶກເລກລະຫັດເລົ່ານັ້ນ(ລະຫັດຂອງຂັ້ນກະຊວງ) ແລ້ວນຳສົ່ງໃຫ້ຫ້ອງການຖານຂໍ້ມູນວິສາຫະກິດແຫ່ງຊາດ ເປັນປົກກະຕິຄືກັບການສົ່ງຂໍ້ມູນໃນໄລຍະຜ່ານມາ ເພື່ອຈະໄດ້ສັງລວມຂໍ້ມູນໃຫ້ຄົບຖ້ວນ.

ຕົວຢ່າງ:ຕາຕະລາງສັງລວມເລກລະຫັດ

| ລ/ດ | ເລກລະຫັດຂອງກະຊວງ | ເລກລະຫັດຂອງແຂວງ:................. |
|---|---|---|
| 1 | 01-00000025 | 16-00008682 |
| 2 | 01-00000658 | 16-00008683 |
| 3 | 01-00000721 | 16-00008684 |

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມສົ່ງເສີມການລົງທຶນທົ່ວໄປ

Scanned by CamScanner